ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3128/ກງ

ນະຄອນຫຼວງວຽງຈັນ, ວັນທີ 23 ກັນຍາ 2025

# ໜັງສືແຈ້ງການ

**ຮຽນ:** - ທ່ານ ລັດຖະມົນຕີ ກະຊວງ ການຕ່າງປະເທດ ທີ່ນັບຖື;

- ທ່ານ ລັດຖະມົນຕີ ກະຊວງ ສາທາລະນະສຸກ ທີ່ນັບຖື;
- ທ່ານ ລັດຖະມົນຕີ ກະຊວງ ສຶກສາທິການ ແລະ ກິລາ ທີ່ນັບຖື.

**ເລື່ອງ:** ແຈ້ງການນຳໃຊ້ເອກະສານປະມູນການຈັດຊື້ ຕາມກອບຕົກລົງ (Framework Agreement)

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 538/ນຍ, ລົງວັນທີ 21 ສິງຫາ 2025;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາເອກະສານການປະມູນ ການຈັດຊື້ຕາມກອບຕົກລົງ (Framework Agreement) ສະບັບເລກທີ 2465/ກງ, ລົງວັນທີ 11 ສິງຫາ 2025;
- ອີງຕາມ ໜັງສືສະເໜີກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ສະບັບເລກທີ 237/ກປຈ, ລົງວັນທີ 10 ກັນຍາ 2025.

ກະຊວງການເງິນ ໃນນາມເປັນເຈົ້າການສ້າງ ແລະ ປັບປຸງບັນດານິຕິກຳທີ່ຕິດພັນກັບວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ; ໃນນັ້ນລວມເຖິງວຽກງານການປະມູນການຈັດຊື້ຕາມກອບຕົກລົງ (Framework Agreement) ຊຶ່ງຮອດປະຈຸບັນໄດ້ສຳເລັດການສ້າງເອກະສານການປະມູນ ການຈັດຊື້ຕາມກອບຕົກລົງ ແລະ ເຄື່ອງມືປະເມີນຜົນ. ເຄື່ອງມືດັ່ງກ່າວຈະຊ່ວຍໃຫ້ຜູ້ຈັດຊື້-ຈັດຈ້າງ ທີ່ດຳເນີນການຈັດຊື້-ຈັດຈ້າງ ຕາມກອບຕົກລົງ ສາມາດກຳນົດຄວາມຕ້ອງການຂອງຕົນໃນເຄື່ອງມືກໍ່ຄືການກຳນົດໄລຍະເວລາກອບຕົກລົງ (ສູງສຸດບໍ່ເກີນ 3 ປີ), ໄລຍະການຈັດສົ່ງ, ຈຳນວນບໍລິສັດທີ່ຕ້ອງການ, ຈຳນວນຄາດຄະເນຂອງສິນຄ້າ ແລະ ອື່ນໆ ເພື່ອຍື່ນໃຫ້ບໍລິສັດຜູ້ສະໜອງ ຕາມລາຄາ ແລະ ເງື່ອນໄຂທີ່ໄດ້ກຳນົດ. ນອກນັ້ນ, ຍັງໄດ້ປະເມີນຜົນ ແລະ ຄັດເລືອກບໍລິສັດ ທີ່ມີເງື່ອນໄຂ ແລະ ລາຄາດີທີ່ສຸດ ເພື່ອເຂົ້າໄປໃນຂະບວນການຈັດຊື້ຂັ້ນຕອນທີ 2 ກໍ່ຄືການສ້າງສັນຍາສັ່ງຊື້ ແມ່ນຈະໄດ້ນຳໃຊ້ສະເພາະການຈັດຊື້ ທີ່ນຳໃຊ້ງົບປະມານແຫ່ງລັດ (ຮ້ອຍເປີເຊັນ) ເຂົ້າໃນການປະມູນການຈັດຊື້ຕາມກອບຕົກລົງ ສຳລັບການຈັດຊື້ສິນຄ້າ ແລະ/ຫຼື ການບໍລິການວຽກງານ. ເປົ້າໝາຍນຳໃຊ້ ແມ່ນ 4 ກະຊວງທົດລອງ ຄື: ກະຊວງ ການເງິນ, ກະຊວງ ການຕ່າງປະເທດ, ກະຊວງ ສາທາລະນະສຸກ ແລະ ກະຊວງ ສຶກສາທິການ ແລະ ກິລາ; ສຳລັບເອກະສານປະມູນໃນການຈັດຊື້ຕາມກອບຕົກລົງ ຈຳນວນ 4 ສະບັບ ດັ່ງນີ້:

1. ສຳລັບຜູ້ຈັດຊື້-ຈັດຈ້າງໜຶ່ງຄົນ ແລະ ຜູ້ສະໜອງຫຼາຍຄົນ;
2. ສຳລັບຜູ້ຈັດຊື້-ຈັດຈ້າງໜຶ່ງຄົນ ແລະ ຜູ້ສະໜອງໜຶ່ງຄົນ;
3. ສຳລັບຜູ້ຈັດຊື້-ຈັດຈ້າງຫຼາຍຄົນ ແລະ ຜູ້ສະໜອງໜຶ່ງຄົນ;
4. ສຳລັບຜູ້ຈັດຊື້-ຈັດຈ້າງຫຼາຍຄົນ ແລະ ຜູ້ສະໜອງຫຼາຍຄົນ ຕາມກອບຕົກລົງແບບລວມສູນ.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງບັນດາທ່ານເພື່ອຊາບ ແລະ ນຳໃຊ້ເອກະສານຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ

ສັນຕິພາບ ພົມວິຫານ